International Trade Centre

TRADE IMPACT
FOR GOOD

ສົ່ງເສີມການເຕີບໂຕແບບມີສ່ວນຮ່ວມ ໂດຍຜ່ານການເຊື່ອມໂຍງເສດຖະກິດພາກພື້ນ, ການປັບປຸງຂໍ້ມູນການຄ້າ ແລະ ເພີ່ມທະວີການເຂົ້າຮ່ວມໃນລະບົບຕ່ອງໂສ້ສາກົນ

# ARISE Plus ປະຈຳ ສປປ ລາວ















ຄູ່ຮ່ວມງານຫຼັກ: **ກະຊວງອຸດສາຫະກຳ ແລະ ການຄ້າ**

ຜູ້ໃຫ້ທຶນ: **ສະຫະພາບເອີຣົບ**

ໄລຍະເວລາ: **2019-2023**

ກຸ່ມເປົ້າໝາຍ: **ຜູ້ຜະລິດ, ຜູ້ສົ່ງອອກຂະໜາດນ້ອຍ ແລະ ຂະໜາດກາງ; ໜ່ວຍງານລັດຖະບານ ຂອງ ສປປ ລາວ**

## ສັງລວມໂຄງການໂດຍຫຍໍ້

ໂຄງການນີ້ ແມ່ນການຊ່ວຍເຫຼືອທາງດ້ານການຄ້າຂອງສະຫະພາບເອີຣົບ ແກ່ ສປປ ລາວ ພາຍໃຕ້ແຜນງານເຊື່ອມໂຍງພາກພື້ນອາຊຽນ (ARISE Plus) ເພື່ອສົ່ງເສີມການຂະຫຍາຍຕົວທາງດ້ານເສດຖະກິດທີ່ສົມດຸນ, ການປັບຕົວເຂົ້າ ກັບການປ່ຽນແປງຂອງດິນຟ້າອາກາດ, ຫຼຸດຜ່ອນຄວາມສ່ຽງ ຈາກໄພທຳມະຊາດ ແລະ ສົ່ງເສີມການສ້າງວຽກເຮັດງານທຳ ຢູ່ ສປປ ລາວ. ໂດຍມີ 3 ເປົ້າໝາຍຫຼັກຄື: ການເຊື່ອມໂຍງພາກພື້ນ, ການສ້າງຜົນປະໂຫຍດ ຈາກໂອກາດທາງການຄ້າ ແລະ ການເຊື່ອມໂຍງຕະຫຼາດ, ແລະ ການພັດທະນາ ລະບົບຕ່ອງໂສ້ມູນຄ່າ.

ໂຄງການ ARISE Plus ປະຈຳ ສປປ ລາວ ເປັນໜຶ່ງໃນໂຄງການ ຂອງ ARISE Plus ລະດັບພາກພື້ນ. ປະກອບສ່ວນເຂົ້າໃນການເຊື່ອມໂຍງຂອງເສດຖະກິດລາວເຂົ້າສູ່ຕ່ອງໂສ້ການຜະລິດໂລກ ໂດຍໃຫ້ການສະໜັບສະໜູນທັງພາກລັດ ແລະ ພາກເອກະຊົນ, ໂດຍສຸມໃສ່ຜູ້ປະກອບການ ແລະ ທຸລະກິດຂະຫນາດນ້ອຍ. ມີຈຸດປະສົງແນໃສ່ປັບປຸງສະພາບແວດລ້ອມຂອງການດຳເນີນທຸລະກິດໃນຂະແໜງການເປົ້າໝາຍໂດຍການເຊື່ອມໂຍງເສດຖະກິດພາກພື້ນ (ອາຊຽນ); ແລະ ເພີ່ມທະວີການຄ້າ ແລະ ການເຂົ້າຮ່ວມໃນຕ່ອງໂສ້ມູນຄ່າໃນສາກົນຂອງຂະແໜງການເປົ້າໝາຍ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຫັນປ່ຽນເສດຖະກິດ.

ຄູ່ຮ່ວມງານຕົ້ນຕໍ ໃນການຈັດຕັ້ງປະຕິບັດໂຄງການລວມມີ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ໜ່ວຍງານທີ່ກ່ຽວຂ້ອງອື່ນໆ, ລວມທັງຜູ້ສົ່ງອອກລາວ ທີ່ຕ້ອງການຂະຫຍາຍຕະຫຼາດໃນເຂດອາຊີ ແລະ ເອີຣົບ, ພ້ອມທັງບັນດາສະຖາບັນສະໜັບສະໜຸນດ້ານການຄ້າ ແລະ ການລົງທຶນ ເຊັ່ນ: ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ໂຄງການດັ່ງກ່າວສາມາດປະກອບສ່ວນເຂົ້າໃນເປົ້າໝາຍການພັດທະນາແບບຍືນຍົງຂອງສະຫະປະຊາຊາດດັ່ງຕໍ່ໄປນີ້:




©ARISE Plus Lao PDR


©ARISE Plus Lao PDR

**ຈຸດປະສົງຂອງໂຄງການ:**

1. **ເພີ່ມທະວີການເຊື່ອມໂຍງເສດຖະກິດພາກພື້ນ** ໂດຍປັບປຸງເງື່ອນໄຂເພື່ອຫຼຸດຜ່ອນຂໍ້ຈໍາກັດຂອງຂະແໜງການ; ຈັດຕັ້ງປະຕິບັດສັນຍາການຄ້າດ້ານສິນຄ້າອາຊຽນ (ASEAN Trade in Goods Agreement) ແລະ ບັນດາພັນທະບູລິມະສິດຕາມແຜນຂອງປະຊາຄົມເສດຖະກິດອາຊຽນ ປີ 2025.
2. **ເພີ່ມທະວີຄວາມຮັບຮູ້ກ່ຽວກັບສິດທິພິເສດທາງດ້ານການຄ້າສໍາລັບການສົ່ງອອກ** ໄປສະຫະພາບເອີຣົບ (ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກສິດທິພິເສດທາງດ້ານອັດຕາພາສີນໍາເຂົ້າສໍາລັບທຸກສິນຄ້າຍົກເວັ້ນອາວຸດ (EBA) ແລະ ສັນຍາການຄ້າອື່ນໆ); ຊ່ວຍ ສປປ ລາວ ກະກຽມເພື່ອຫັນໄປສູ່ລະບອບການຄ້າແບບໃໝ່ ພາຍຫຼັງຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ.
3. **ປັບປຸງການບໍລິການສະໜັບສະໜູນຫົວໜ່ວຍທຸລະກິດ**, ໂດຍສຸມໃສ່ຊ່ວຍເຫຼືອຜູ້ປະກອບການ ແລະ ທຸລະກິດຂະໜາດນ້ອຍ (ໂດຍສະເພາະແມ່ນແມ່ຍິງ), ຫຼຸດຜ່ອນຂໍ້ຈໍາກັດດ້ານການສະໜອງ ແລະ ການສົ່ງເສີມການຄ້າ ແລະ ການລົງທຶນໃນຂະແໜງການເປົ້າໝາຍ (ຂະແໜງການປຸງແຕ່ງໄມ້ ແລະ ຜະລິດຕະພັນກະສິກໍາ).

## ຜົນໄດ້ຮັບມາຮອດປັດຈຸບັນ

### 1) ເພີ່ມທະວີການເຊື່ອມໂຍງເສດຖະກິດພາກພື້ນ

ຍ້ອນການຊ່ວຍເຫຼືອຂອງໂຄງການ, ສປປ ລາວ ໄດ້ສໍາເລັດ:

- **ການສ້າງແຜນພັດທະນາການເຈລະຈາການຄ້າຕ່າງປະເທດ** ສະບັບທໍາອິດ ທີ່ກໍານົດຍຸດທະສາດການເຈລະຈາດ້ານການຄ້າໃນອະນາຄົດ, ແລະ ໄດ້ຝຶກອົບຮົມການເຈລະຈາໃຫ້ແກ່ພະນັກງານການຄ້າ.
- ກໍານົດ ຊ່ອງຫວ່າງຂອງສັນຍາການຄ້າດ້ານສິນຄ້າອາຊຽນ 18 ຫົວຂໍ້ ແລະ ສະເໜີຄໍາແນະນໍາເພື່ອປັບປຸງ 24 ຫົວຂໍ້. ເພື່ອຊ່ວຍໃຫ້ ສປປ ລາວ **ສາມາດກະກຽມສັນຍາການຄ້າລະດັບພາກພື້ນໄດ້ດີກວ່າເກົ່າ** ແລະ ເພີ່ມທະວີສາຍພົວພັນດ້ານການຄ້າໃນອາຊຽນ ແລະ ທົ່ວໂລກ.
- **ພັດທະນາດ້ານ ຄວາມປອດໄພຂອງອາຫານ ແລະ ມາດຕະຖານດ້ານຄຸນນະພາບສໍາລັບການສົ່ງອອກ,** ລວມທັງຈັດການປະເມີນໜ່ວຍງານປະເມີນຄວາມສອດຄ່ອງ 3 **ຫົວໜ່ວຍ,** ປັບປຸງມາດຕະຖານແຫ່ງຊາດ ຂອງ 2 ຜະລິດຕະພັນທີ່ເປັນເປົ້າໝາຍ.
- ມີຜູ້ເຂົ້າຮ່ວມຫຼາຍກວ່າ 500 ທ່ານ ມາຈາກພາກລັດ ແລະ ພາກເອກະຊົນໄດ້ຮັບການຝຶກອົບຮົມກ່ຽວກັບນະໂຍບາຍການຄ້າ, ການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ດ້ານຄຸນນະພາບ.

### 2) ການສ້າງຜົນປະໂຫຍດ ຈາກໂອກາດທາງການຄ້າ ແລະ ການເຊື່ອມໂຍງຕະຫຼາດກັບສະຫະພາບເອີຣົບ

- ໂອກາດການເຂົ້າເຖິງຕະຫຼາດ ພາຍໃຕ້ສິດທິພິເສດທາງດ້ານອັດຕາພາສີສໍາລັບທຸກສິນຄ້າຍົກເວັ້ນອາວຸດ ແລະ ອື່ນໆອີກ, ເພື່ອເພີ່ມທະວີການສົ່ງອອກໄປຍັງ EU.
- ຄູຝຶກລາວ 15 ທ່ານ ແລະ ນັກວິຊາການຈາກພາກລັດ ແລະ ພາກເອກະຊົນ ໄດ້ຮັບການ**ຮຽນຮູ້**ກ່ຽວກັບຫົວຂໍ້ນີ້. **ຄູ່ມືທຸລະກິດກ່ຽວກັບ ສິດທິພິເສດທາງດ້ານອັດຕາພາສີສໍາລັບທຸກສິນຄ້າຍົກເວັ້ນອາວຸດ 6 ເຫຼັ້ມ** – 1 ເຫຼັ້ມສໍາລັບຂໍ້ມູນລວມ ແລະ 5 ເຫຼັ້ມສໍາລັບ ຂະແໜງການສະເພາະ, ສາມາດເຂົ້າເຖິງໄດ້ທາງອອນລາຍ.
- ວິຊາການທາງດ້ານນະໂຍບາຍການຄ້າ ໄດ້ຮັບການຝຶກອົບຮົມໃນການສ້າງແບບຈໍາລອງນະໂຍບາຍການຄ້າລະດັບສູງ ເພື່ອຄາດຄະເນຜົນກະທົບພາຍຫຼັງທີ່ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດທີ່ດ້ອຍພັດທະນາ.
- ເຮັດບົດຄົ້ນຄວ້າ ແລະ ເຜີຍແຜ່ຜົນກະທົບທາງດ້ານການຄ້າ ຫຼັງຈາກທີ່ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບປະເທດທີ່ດ້ອຍພັດທະນາ. ຄາດວ່າຈະນໍາສະເໜີຢູ່ໃນກອງປະຊຸມ LDC 5.

- ສ້າງຈິດສຳນຶກກ່ຽວກັບຄວາມຕ້ອງການມາດຕະຖານດ້ານຄຸນນະພາບພາຍໃຕ້ໂຄງການ Quality Champions. ຊ່ຽວຊານດ້ານຄຸນນະພາບ 15 ທ່ານ ສາມາດປະເມີນ, ຝຶກສອນ ແລະ ແນະນຳ ໃຫ້ບັນດາບໍລິສັດໃນການປັບປຸງດ້ານຄຸນນະພາບ ແລະ ກະກຽມສະເໜີຂໍການຢັ້ງຢືນຈາກສາກົນ.

### 3) ຂະຫຍາຍການມີສ່ວນຮ່ວມໃນລະບົບຕ່ອງໂສ້ສາກົນ

ໂຄງການຈະສະໜັບສະໜູນ ສປປ ລາວ ໃນການແກ້ໄຂຂໍ້ຫຍຸ້ງຍາກຕ່າງໆດ້ານການສະໜອງ, ເພີ່ມທະວີການບໍລິການສະໜັບສະໜູນ, ປັບປຸງສະພາບການລົງທຶນ ແລະ ສະໜັບສະໜູນການສົ່ງເສີມດ້ານການຄ້າ ແລະ ການລົງທຶນ ໂດຍສຸມໃສ່ຜະລິດຕະພັນໄມ້ແປຮູບ ແລະ ກາເຟລວມມີກິດຈະກຳດັ່ງລວມນີ້:

- ແຜນພັດທະນາການສົ່ງອອກຜະລິດຕະພັນໄມ້ປຸງແຕ່ງ ແລະ ກາເຟ ໄດ້ຖືກຮັບຮອງໂດຍ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ແລະ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້. ການຕິດຕາມການຈັດຕັ້ງປະຕິບັດປະຕິບັດແຜນພັດທະນາທັງ 2 ຂະແໜງແມ່ນພວມດຳເນີນຢູ່.
- ວິຊາການກ່ຽວກັບນະໂຍບາຍການຄ້າໄດ້ຮັບການຝຶກອົບຮົມກ່ຽວກັບການຄຸ້ມຄອງຂໍ້ມູນ, ເພື່ອປັບປຸງສະຖິຕິການຄ້າໃນປະເທດ.
- ມີຫຼາຍກວ່າ 100 ທ່ານໄດ້ຮັບການຝຶກອົບຮົມກ່ຽວກັບການເຮັດສວນກາເຟອິນຊີ, 24 ທ່ານໄດ້ຮັບ ການແນະນຳພິເສດກ່ຽວກັບການປະຕິບັດຫຼັກການອິນຊີ. 50 ທ່ານ ມາຈາກອຸດສາຫະກຳກາເຟ ໄດ້ຮັບການຝຶກອົບຮົມທັກສະດ້ານການວິໄຈລົດຊາດ, ເພື່ອສົ່ງເສີມ ແລະ ສະຫນັບສະຫນູນ ການສ້າງມູນຄ່າເພີ່ມໃນກາເຟພິເສດ.
- ກິດຈະກຳສະໜັບສະໜູນການນຳໃຊ້ໄມ້ຈາກແຫຼ່ງທີ່ມາທີ່ຍືນຍົງ ເພື່ອຕອບສະໜອງເງື່ອນໄຂການນຳໃຊ້ໄມ້ທີ່ຖືກຕ້ອງຕາມກົດໝາຍ ຂອງບັນດາຕະຫຼາດທີ່ມີທ່າແຮງເຊັ່ນ: ສະຫະພາບເອີຣົບ, ແລະ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນໄມ້ຂອງລາວ.

International Trade Centre

**ທ່ານ ນາງ ເອັມມີລີ ໄດລອນ**
ວິຊາການແຜນງານ ປະຈຳຫ້ອງການອາຊີ ແລະ ປາຊີຟິກ, ITC
edairon@intracen.org
+41 22 730 0614
ITC, Palais des Nations, 1211 Geneva 10, Switzerland
www.intracen.org

**ທ່ານ ນາງ ໂສດາວັນ ສຸວັນນະພູມ**
ຜູ້ປະສານງານໂຄງການ, ໜ່ວຍງານຈັດຕັ້ງປະຕິບັດໂຄງການ
sodavanh.s@laomoic.org
+856 202 223 0123
ກະຊວງອຸດສາຫະກຳ ແລະ ການຄ້າ, DPC / NIU,
ຖະໜົນໂພນໄຊ, P.O. Box 4107, ວຽງຈັນ
www.t4dlaos.org/eu-ict-project/

**ທ່ານ ນາງ ຂັນແກ້ວ ມູນວົງ**
ຜູ້ປະສານງານໂຄງການ, ຫ້ອງການອາຊີ ແລະ ປາຊີຟິກ, ITC
Kmoonvong@intracen.org
+856 207 770 3011
ກະຊວງອຸດສາຫະກຳ ແລະ ການຄ້າ, DPC / NIU,
ຖະໜົນໂພນໄຊ, P.O. Box 4107, ວຽງຈັນ

**ຂໍ້ມູນເພີ່ມເຕີມທີ່:**

www.intracen.org/arise-plus-laos/

www.facebook.com/groups/ariseplus